ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ
ຫ້ອງການ

ເລກທີ 025 /ກຜທ.ຮມສ-ຈສກ-ອ
ນະຄອນຫຼວງວຽງຈັນ, ວັນທີ 05 ມັງກອນ 2022

**<u>ໜັງສືເຊີນ</u>**

**ຮຽນ:** .................................................................................................

................................................................................., **ທີ່ນັບຖືຢ່າງສູງ**

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມໂຕະມົນ ປະຈໍາປີ 2022 ເຊິ່ງຈະຈັດຂຶ້ນໃນວັນທີ 26 ມັງກອນ 2023, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 0234/ກຜທ, ລົງວັນທີ 02 ກຸມພາ 2022;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ສະບັບເລກທີ 1635/ຫສນຍ, ລົງວັນທີ 03 ພະຈິກ 2022 ກ່ຽວກັບການເຫັນດີໃຫ້ຈັດກອງປະຊຸມໂຕະມົນ ປະຈໍາປີ 2022.

ຫ້ອງການ, ກະຊວງແຜນການ ແລະການລົງທຶນ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມໂຕະມົນປະຈໍາປີ 2022 ພາຍໃຕ້ຫົວຂໍ້ "ເລັ່ງລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ປະຈໍາປີ 2022 ແລະ ແຜນປີ 2023 ເພື່ອບັນລຸເປົ້າໝາຍການພັດທະນາ ແບບຍືນຍົງ ແລະ ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ" **ທີ່ຈະໄດ້ຈັດຂຶ້ນໃນວັນທີ 26 ມັງກອນ 2023, ເວລາ 08:30-16:30 ໂມງ, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.** ຈຸດປະສົງຂອງກອງປະຊຸມແມ່ນເພື່ອ ນໍາສະເໜີ ຄວາມຄືບໜ້າການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ **5** ປີ ຄັ້ງທີ IX ປະຈໍາປີ 2022 ແລະ ແຜນການຈັດຕັ້ງປະຕິບັດ ປີ 2023, ຍຸດທະສາດທາງດ້ານການເງິນ ເພື່ອສະໜັບສະໜູນເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX, ຄວາມຄືບໜ້າໃນການກະກຽມຍຸດທະສາດການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ການຟື້ນຟູເສດຖະກິດຂອງ ສປປ ລາວ ແລະ ທິດທາງການຮ່ວມມືເພື່ອການພັດທະນາ ໂດຍສະເພາະ ແຜນດໍາເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ແລະການທົບທວນຄືນໜ່ວຍງານຂະແໜງການ.

ກອງປະຊຸມດັ່ງກ່າວ ໄດ້ຮັບກຽດເປັນປະທານໂດຍ ທ່ານ ຄໍາເຈນ ວົງໂພສີ, ລັດຖະມົນຕີ ກະຊວງແຜນການ ແລະ ລົງທຶນ ແລະ ທ່ານ ນາງ ຊາຣາ ເຊັກກິເນັດ (Sara Sekkenes), ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈໍາ ສປປ ລາວ, ພ້ອມທັງມີຜູ້ເຂົ້າຮ່ວມຂັ້ນ ຮອງລັດຖະມົນຕີ, ຮອງປະທານຄະນະກໍາມາທິການສະພາແຫ່ງຊາດ, ຮອງເຈົ້າແຂວງ, ຄະນະຫ້ອງການ, ຄະນະກົມຈາກບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ, ຄະນະພະແນກແຜນການ ແລະການລົງທຶນ

ຈາກບັນດາແຂວງ, ບັນດາຄູ່ຮ່ວມພັດທະນາ ລວມທັງຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນຈຳນວນໜຶ່ງ ເຂົ້າຮ່ວມກອງປະຊຸມດັ່ງກ່າວ (ລາຍລະອຽດໄດ້ຂັດຕິດວາລະກອງປະຊຸມມາພ້ອມນີ້).

ຫວັງຢ່າງຍິ່ງ ທ່ານ ຄົງຈະເສຍສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ອຸຕະແກ້ວ ແກ້ວດວງສິນ

**<u>ໝາຍເຫດ:</u>**

ເບີໂທຕິດຕໍ່

ທ. ເກດຕິສັກ ຂັນທະວົງ
Tel: +856 20 59899987
ທ. ທະວີໄຊກາສີສະຫວັດ
Tel: +856 20 55384455